# ຄົນໜ້າເປື່ອ

ໂດຍ: ບ່າວຫຼັກເຈັດ

ຄືກັບຄົນບໍ່ມີເສື້ອ　　　　ຄົນໜ້າເປື່ອຄືຕົວມານ ແລ້ວນໍ
ສາວລຳຄານຍາມເຮົາຈາ　　　　ວ່າເມື່ອຍຍິນພໍແລ້ວ
ແນວເປັນຄົນບໍ່ມີເລ້　　　　ປົນສເນ່ສົມໃສ່ ຄືເຂົາແລ້ວ
ມີແຕ່ຄວາມຈິງໃຈ ສາວບໍ່ຢາກກ່າວຕ້ານ　ລຳຄານອ້າຍບໍ່ຊ່າງຈາ

ກ່ອນຊິໄກດອກຟ້າ　　　　ລາຫ່າງໄປສອງວັນ
ກ່ອນຈາກກັນຫວັງອຳລາ　　　　ແຕ່ວ່ານາງບໍ່ສົນຈ້ອຍ
ຊ້ຳພັດເຫຫັນຄ້ອຍ　　　　ນຳເວທີ ບ່ອນຂຽນສິ່ງ
ເພິ່ນເສັຽໃຈທີ່ອ້າຍສົ່ງ ຂຽນຂໍ້ຄວາມຫ່າວເວົ້າ　"ເປັນນຳເຈົ້າບໍ່ຄຶດຂຽນ"

ຄວາມໄຍດີຊ່າງກຸດຫ້ຽນ　　　　ວຽນເຫັນແຕ່ຄວາມຜິດ　ເດນໍ
ຈິດໃຈນາງພັດເມົາຫວງ　　　　ຫ່ວງແຕ່ຂຽນ ບໍ່ມີເສົ້າ
ເລີຍບໍ່ມີທາງເວົ້າ　　　　ພໍໄດ້ລາເອີ້ນສົ່ງ ເສັຽແລ້ວ
ໜົດແລ້ວນໍຄວາມຫວັງ　ພັງທະລາຍແພ້ທຸກດ້ານ　ສວັນຊິໃຫ້ຫຼີກທາງ ນາງແລ້ວ

ເຫຼືອແຮງຄິດຕໍ່ຕັ້ງ　　　　ຫວັງຄຽງຄູ່ເປັນສາມີ ຈິງແລ້ວ
ເຂົາອາລັຍຍິນດີ　　　　ແຕ່ໂຈມຕີເຮົາ ໜັກເລື້ອຍ

ຍາມ ໂທຫາຕາຕັ້ງ ທັງໄຂຂານບອກວ່າ ເມື່ອຍ
ເຮັດສິ່ງໃດ ມີແຕ່ຜິດຢູ່ເລື້ອຍ ສາຍຕານ້ອງບໍ່ຢາກເຫັນ ຂໍໂທດເດີ

ເກືອບທຸກວັນທີ່ເຂົ້າເນັ້ນ ເປັນຫນ້າເບື່ອຕົວລຳຄານ ວ່າເດ
ຄວາມສົງສານກາຍເປັນຊັງ ຫນ່າຍສະອາງ ຢ່ມາເວົ້າ
ບໍ່ພໍຄາວລົມກັບອ້າຍ ບັລຍາຍບໍ່ຊື້ນເຮື່ອງ
ຊ້ຳບໍ່ພໍ ຕູ່ວ່າເຮົາກໍ່ເຮື່ອງ ໄປເຄືອງຮ້ອນບ່ອນເພີ່ນຂຽນ

ຄືເປັນຫມາຂີ້ເຮື້ອນ ຖືກເຂົາໄລ່ໄສຫົວ
ເຂົາເປັນຄົນລືມຕົວ ປຽບດັ່ງງົວລືມເຈົ້າ
ຢູ່ເພື່ອທົນເຂົາເວົ້າ ແຜດສຽງແຂງແທງທັ່ງ ເຮົາແລ້ວ
ແຫນບໍ່ມີຫນອງຢັ່ງ ນ້ຳໄຫຼທັ່ງຖອກຫນ້າ ຕ້ອງລາຍ້າຍພ່າຍຫນອງ....